# ບົດທີ 12

# ພະເຢຊູຖືກທົດລອງໃນສະພາບເປັນມະນຸດ

| |
|---|
| ພະເຢຊູຕໍ່ຕ້ານການທົດລອງຂອງພະຍາມານ ບໍ່ແມ່ນໂດຍໃຊ້ອຳນາດໃນສະພາບເປັນພະເຈົ້າ ແຕ່ແມ່ນໂດຍເຄື່ອງອາວຸດ. ເຊັ່ນດຽວກັນກັບພວກເຮົາ ເລື່ອງນີ້ໃຫ້ເຮົາພາກັນໄປສຶກສາກ່ຽວກັບການທົດລອງອັນທຳອິດຄື: ມທ 4:24 ຈົ່ງອ່ານຄືນອີກ! |

(ຖ້າອ່ານແລ້ວຈົ່ງຮຽນຕໍ່)

**1** ເຫັນວ່າພະເຢຊູບໍ່ຍອມໃຊ້ອຳນາດພະເຈົ້າຕໍ່ສູ້ພະຍາມານໃນປ່າ ຫມາຍຄວາມວ່າພະເຢຊູທົນການທົດລອງເຊັ່ນດຽວ ກັນກັບພວກເຮົາໃນສະພາບໃດ? ________________________

**2** ທີ່ພະເຢຊູຍົກຂໍ້ພະຄຳພີວ່າ "ມະນຸດຈະບໍ່ລ້ຽງຊີວິດດ້ວຍອາຫານສິ່ງດຽວ" ສະແດງວ່າ ພະເຢຊູອ້າງເຖິງສະພາບໃດ? (ໃຫ້ເລືອກເອົາຂໍ້ທີ່ຖືກ)

ກ. ທູດສະຫວັນ ຂ. ພະເຈົ້າ ຄ. ມະນຸດ

**3** (ຈົ່ງຕື່ມຄວາມທີ່ຂາດ) ມທ 4:4 ວ່າ "ມະນຸດຈະບໍ່ລ້ຽງຊີວິດດ້ວຍອາຫານ _____________".

**4** ຄຳວ່າ "ສິ່ງດຽວ" ສຳຄັນຫຼາຍເພາະເປັນຄວາມຫມາຍໃນປະໂຫຍກ. ຄັນເຮົາຈະ "ລ້ຽງຊີວິດດ້ວຍອາຫານ" ເຮົາ ຢູ່ໃຕ້ການປົກຄອງຂອງພະເຈົ້າກໍໄດ້. ຖ້າເຮົາຈະ "ລ້ຽງຊີວິດດ້ວຍອາຫານສິ່ງດຽວ" ຫມາຍຄວາມວ່າ ເຮົາຢູ່ດ້ວຍ ບໍ່ຮັບຮູ້ພະເຈົ້າ. ຜູ້ທີ່ "ລ້ຽງຊີວິດດ້ວຍອາຫານສິ່ງດຽວ" ເປັນຢ່າງໃດ? (ໃຫ້ຫມາຍເອົາຂໍ້ທີ່ຖືກ)

ກ. ຫາກິນແຕ່ບໍ່ຫ່ວງກັບພະເຈົ້າ
ຂ. ຫາກິນແລະຍອມຮັບຮູ້ວ່າ ພະເຈົ້າເປັນຜູ້ປົກຄອງ
ຄ. ບໍ່ຫ່ວງກັບອາຫານກິນ

**5** ການດຳເນີນຊີວິດປາສະຈາກພະເຈົ້າເປັນບາບ ພະຍາມານມາທົດລອງພະເຢຊູໃຫ້ຫຼົງຜິດໃນປະການໃດ? ໃຫ້ເລືອກຫມາຍ √ ເອົາຂໍ້ທີ່ຖືກ

______ ຢູ່ດ້ວຍອາຫານ ______ ຢູ່ດ້ວຍອາຫານສິ່ງດຽວ ______ ບໍ່ຢູ່ດ້ວຍອາຫານ

ຕອບ:

**1** *ມະນຸດ*
**2** *ຄ.ຖືກ*
**3** *ສິ່ງດຽວ*
**4** *ກ.ຖືກ*
**5** *ຢູ່ດ້ວຍອາຫານສິ່ງດຽວ*

ໃຫ້ທ່ານເປີດອ່ານ ເລື່ອງການທົດລອງຢູ່ຫຼັງຄາພະວິຫານ
ໃນ ມທ 4:5-7 ອີກ



(ຫຼັງຈາກອ່ານຕອນພະຄຳພີແລ້ວໃຫ້ຮຽນຕໍ່ໄປ)

**6** ໃນບົດຮຽນກ່ອນນັ້ນເຮົາໄດ້ຮຽນເລື່ອງພະຍາມານທົດລອງພະເຢຊູໃຫ້ໂຕນລົງຈາກພະວິຫານ ເພື່ອຈະໃຫ້ພະອົງມີຊື່ສຽງ ຕໍ່ຫນ້າປະຊາຊົນທັງຫມົດ. ໃນຂໍ້ 7 ພະເຢຊູ ຕອບວ່າ "ຢ່າທົດລອງ ພະອົງຜູ້ເປັນພະເຈົ້າຂອງທ່ານ" ການທົດລອງ ພະເຈົ້າຫມາຍຄວາມວ່າຢ່າງໃດ? (ໃຫ້ຫມາຍ ເອົາຂໍ້ທີ່ຖືກ)

ກ. ຮ່ວມກະທຳກັບພະເຈົ້າ

ຂ. ກະທຳຕາມພະໄທຂອງພະເຈົ້າ

ຄ. ການກະທຳໂດຍບໍ່ຫ່ວງກັບພະເຈົ້າ ຈຶ່ງລອງເພື່ອຢາກຮູ້ວ່າພະອົງຈະຊ່ອຍໄດ້ຫຼືບໍ່!

**7** ການລອງເບິ່ງພະເຈົ້າກໍຄື ການກະທຳໂດຍອ້າງເຖິງພະເຈົ້າທີ່ບໍ່ຫ່ວງວ່າ ຈະຖືກກັບນ້ຳພະໄທ ຂອງພະອົງ. ດັ່ງນັ້ນຖ້າ ພະເຢຊູຈະໂຕນລົງແລ້ວທູດສະຫວັນມາຊ່ວຍ ພະເຢຊູໄດ້ຊື່ສຽງດີປາ ສະຈາກນ້ຳພະໄທຂອງໃຜ? ______________________________

**8** ກ. ພະຍາມານມາທົດລອງພະເຢຊູໃນການຫາອາຫານສິ່ງດຽວຢູ່ບ່ອນໃດ? __________

ຂ. ພະຍາມານມາທົດລອງພະເຢຊູໃນການຈະໄດ້ກຽດຕິຍົດນອກຈາກນ້ຳພະໄທຂອງພະເຈົ້າ ຢູ່ໃສ? ______________________________

**9** ກ. ໃນປ່າພະຍາມານມາທົດລອງພະເຢຊູ ໃຫ້ໄດ້ ______________ ປາສະຈາກ ພະເຈົ້າ.

ຂ. ຢູ່ຫຼັງຄາພະວິຫານ ພະຍາມານມາທົດລອງພະເຢຊູ ໃຫ້ໄດ້ ______________ ປາສະຈາກພະເຈົ້າ.

ຕອບ:

**6** *ຄ. ຖືກ*

**7** *ພະເຈົາ*

**8** *ກ. ຢູ່ປ່າ* *ຂ. ຫຼັງຄາພະວິຫານ*

**9** *ກ. ອາຫານ* *ຂ. ອິດທິພົນ (ຫຼືຊື່ສຽງກໍໄດ້)*

ໃຫ້ທ່ານອ່ານ ມທ 4:8-11 ເລື່ອງການທົດລອງຢູ່ພູສູງ



(ຫຼັງຈາກອ່ານມາແລ້ວໃຫ້ທ່ານຮຽນຕໍ່ໄປ)

**10** ກ. ໃນ ມັດທາຍ 4:8-9 ພະຍາມານສະເຫນີຫຍັງໃຫ້ກັບພະອົງ? (ຈົ່ງຕື່ມຄວາມທີ່ຂາດ) ບັນດາ ______________________________ ໃນ ________________________

ຂ. ແຕ່ພະເຢຊູຕ້ອງເຮັດຫຍັງກ່ອນ? ____________________________________

**11** ຖ້າພະເຢຊູຈະເຮັດຕາມຄຳສະເຫນີຂອງພະຍາມານໂດຍການຂາບໄຫວ້ມານຢ່າງນັ້ນພະອົງຈະໄດ້ຫຍັງ? (ໃຫ້ເລືອກເອົາຂໍ້ທີ່ຖືກ)

ກ. ຈະໄດ້ອຳນາດປາສະຈາກພະເຈົ້າ

ຂ. ຈະໄດ້ອຳນາດພ້ອມດ້ວຍພະເຈົ້າ

ຄ. ຈະໄດ້ອຳນາດປົກຄອງແຕ່ແຂວງດຽວເທົ່ານັ້ນ

**12** ເຖິງວ່າມີການທົດລອງ 3 ປະການຕ່າງກັນກໍຕາມ ແຕ່ທັງສາມມີຈຸດຫມາຍອັນດຽວຄື: ຈະໃຊ້ອຳນາດພະເຈົ້າມາແກ້ ໄຂບັນຫາທີ່ພົບໃນສະພາບມະນຸດ.

ກ. ມານມາທົດລອງໃຫ້ພະເຢຊູໄດ້ອາຫານປາສະຈາກພະເຈົ້າ ຢູ່ໃສ? ______________

ຂ. ຈະໄດ້ອິດທິພົນປົກຄອງປາສະຈາກພະເຈົ້າ ຢູ່ໃສ? __________________________

ຄ. ຈະໄດ້ກຽດຕິຍົດປາສະຈາກພະເຈົ້າ ຢູ່ໃສ? ______________________________

**13** ກ. ພະຍາມານມາທົດລອງພະເຢຊູໃຫ້ໄດ້ຫຍັງໃນປ່າ? ________________________

ຂ. ໃຫ້ໄດ້ຫຍັງຢູ່ຫຼັງຄາພະວິຫານ? ____________________________________

ຄ. ໃຫ້ໄດ້ຫຍັງທີ່ຢູ່ພູສູງ? ______________________________________

ຕອບ:

***10*** *ກ. ລາຊະແຜ່ນດິນ....ໂລກ ຂ. ຕ້ອງຂາບໄຫວ້ມານ*

***11*** *ກ. ຖືກ*

***12*** *ກ. ປ່າ ຂ. ພູສູງ ຄ. ຫຼັງຄາພະວິຫານ*

***13*** *ກ. ໃຫ້ໄດ້ອາຫານປາສະຈາກພະເຈົາ ຂ. ກຽດຕິຍົດປາສະຈາກພະເຈົາ*

*ຄ. ອິດທິພົນປາສະຈາກພະເຈົາ*

**14** ເຖິງວ່າການທົດລອງ 3 ເທື່ອຄ້າຍຄືກັນໃນຫຼາຍດ້ານກໍຕາມ ແຕ່ວ່າຍັງມີສ່ວນແຕກຕ່າງກັນອີກ. ການທົດລອງໃນປ່າ ທີ່ຈະໃຫ້ພະເຍຊູໄດ້ອາຫານປາສະຈາກພະເຈົ້າ ບາບນັ້ນຄືບາບທີ່ອາໄສວັດຖຸສິ່ງຂອງ ຜູ້ເຊື່ອໃນວັດຖຸສິ່ງຂອງກໍມີ ເຂົາ ອາດຈະບໍ່ມີສິ່ງຂອງປານໃດ ແຕ່ເຂົາຍັງຖືວ່າວັດຖຸສິ່ງຂອງນັ້ນສຳຄັນແລະການຢາກໄດ້ສິ່ງຂອງນັ້ນ ເປັນການບັງຄັບຊີ ວິດຂອງເຂົາ. ຂໍໃຫ້ທ່ານອ່ານແລ້ວ ຈິ່ງອະທິບາຍເລື່ອງຄຳອຸປະມາເລື່ອງຜູ້ຫວ່ານ ໃນ ມທ 13:18-23 ການທົດລອງດ້ານວັດຖຸສິ່ງຂອງປຽບເຫມືອນຢ່າງໃດ? (ໃຫ້ເລືອກເອົາຂໍ້ທີ່ຖືກ)

ກ. ເມັດທີ່ຫວ່ານລົງຕາມທາງ

ຂ. ເມັດທີ່ຫວ່ານຕົກໃນບ່ອນທີ່ມີຫີນຫຼາຍ

ຄ. ເມັດທີ່ຫວ່ານຕົກກາງພຸ່ມຫນາມ

ງ. ເມັດທີ່ຫວ່ານຕົກລົງໃນດິນດີ

**15** ພະຍາມານມາທົດລອງພະເຍຊູໃຫ້ຢາກໄດ້ກຽດຕິຍົດປາສະຈາກພະເຈົ້າຢູ່ບ່ອນຫຼັງຄາພະວິຫານ. ການທົດລອງຢ່າງນີ້ ຢູ່ໃນດ້ານຄວາມຈອງຫອງ. ຖ້າພະເຍຊູໄດ້ຕົກໃນການທົດລອງນັ້ນ ແມ່ນມະນຸດຈະເປັນຜູ້ຮັບກຽດຕິຍົດບໍ່ແມ່ນພະເຈົ້າ ຄົນທີ່ອວດຕົວ ມັກຈະອວດເລື່ອງຄວາມສາມາດຂອງຕົນເອງ ທີ່ຈະອວດໃນຕົວເອງກໍບໍ່ຖືກ. ໃນ 3 ຂໍ້ພະຄຳພີຕໍ່ໄປນີ້ ມີ 2 ຂໍ້ທີ່ເຕືອນເລື່ອງຜູ້ມັກໃຫຍ່ໄຝ່ສູງ. (ໃຫ້ເລືອກເອົາຂໍ້ທີ່ຖືກ)

ກ. ສຸພາສິດ 8:13 ຂ. ມັດທາຍ 12:25 ຄ. ໂລມ 12:16

**16** ໃນສອງຂໍ້ພະຄຳພີຕໍ່ໄປນີ້ ແມ່ນຂໍ້ໃດທີ່ຄວາມຫມາຍເຂົ້າກັບການທົດລອງຂອງພະເຍຊູໃນປ່າ? ຂໍ້ໃດຖືກກັບການທົດລອງຂອງພະເຍຊູຢູ່ຫຼັງຄາພະວິຫານ?

ມທ 6:2 ______________________________________________

ມທ 6:19 ______________________________________________

**17** ພະຍາມານມາທົດລອງພະເຍຊູຢູ່ພູສູງໃຫ້ພະອົງຢາກໄດ້ອຳນາດປາສະຈາກພະເຈົ້າ. ຄົນທີ່ຕົກໃນການທົດ ລອງນັ້ນເປັນຄົນຢາກໄດ້ອຳນາດຢ່າງໃດຢ່າງຫນຶ່ງ ອາດຊື້ຈ້າງຈອບອອຍກໍມີ ບາງເທື່ອເຂົາມັກເປັນນາຍ ຫຼືຢາກບັງຄັບຜູ້ອື່ນເຂົາອາດຈະໃຊ້ສິດອຳນາດແບບຮຸນແຮງ. ໃນ ມທ 2:16 ເຮໂລດຜູ້ຍິ່ງໃຫຍ່ຕົກໃນການທົດລອງຢ່າງໃດ? ____________________________

______________________________________________

ຕອບ:

**14** *ຄ. ຖືກ*

**15** *ກ. ແລະ ຄ. ຖືກ*

**16** *ມທ 6:2 ຖືກກັບ ພະເຍຊູຢູ່ຫລັງຄາພະວິຫານ*

*ມທ 6:19 ຖືກກັບ ພະເຍຊູຢູ່ໃນປ່າ*

**17** *ການທົດລອງເຊັ່ນດຽວກັບພະເຍຊູພົບໃນພູສູງ (ອຳນາດການປົກຄອງ)*

**18** ໃນ 3 ຂໍ້ພະຄຳພີຕໍ່ໄປນີ້ໃຫ້ທ່ານຂຽນໄວ້ວ່າ ຂໍ້ໃດຖືກກັບການທົດລອງໃນປ່າ (ວັດຖຸສິ່ງຂອງ) ຂໍ້ໃດຖືກກັບການທົດລອງ ຢູ່ຫຼັງຄາພະວິຫານ (ຢາກໄດ້ກຽດຕິຍົດ) ຂໍ້ໃດຖືກກັບການທົດລອງຢູ່ພູສູງ (ອຳນາດປົກຄອງ)

ມັດທາຍ 6:5 ____________________________________________

ມັດທາຍ 6:24 ___________________________________________

ກິດຈະການ 8:18-20 ______________________________________

**19** ໃນ 8 ຂໍ້ພະຄຳພີຕໍ່ໄປນີ້: ມທ 6:2 ມທ 6:24 ມທ 6:5 ມທ 6:31
ມທ 6:16 ມທ 6:27 ມທ 6:19 ມທ 5:38

ໃຫ້ທ່ານຕີຄວາມຫມາຍແຕ່ລະຂໍ້ນັ້ນໃຫ້ເຂົ້າໃຈເພື່ອເອົາມາໃສ່ໃນ 3 ຫ້ອງລຸ່ມນີ້ໃຫ້ຖືກຕ້ອງໃນຄວາມຫມາຍດຽວກັນ.

| *ເຊັ່ນດຽວກັບຢູ່ໃນປ່າ (ວັດຖຸສິ່ງຂອງ)* | *ເຊັ່ນດຽວກັບຢູ່ເທິງຫຼັງຄາວິຫານ (ກຽດຕິຍົດ)* | *ເຊັ່ນດຽວກັບຢູ່ພູສູງ (ອຳນາດປົກຄອງ)* |
|---|---|---|
| | | |

**20** ທຸກໆ ເທື່ອທີ່ພະເຢຊູຊະນະຕໍ່ການທົດລອງຂອງພະຍາມານ ພະອົງເວົ້າແຕ່ຄວາມດຽວທຸກເທື່ອ. ໃນ ມທ 4:4 ມທ 4:7 ແລະ ມທ 4:10 ແມ່ນຄຳເວົ້າອັນໃດທີ່ເຫັນທັງສາມເທື່ອ? (ໃຫ້ເລືອກເອົາຂໍ້ທີ່ຖືກ)

ກ. “ຢ່າທົດລອງພະອົງຜູ້ເປັນພະເຈົ້າຂອງທ່ານ”

ຂ. “ມະນຸດຈະບຳລຸງລ້ຽງຊີວິດດ້ວຍອາຫານສິ່ງດຽວ”

ຄ. “ຈົ່ງຂາບໄຫວ້ພະອົງຜູ້ເປັນພະເຈົ້າຂອງເຈົ້າ”

ງ. “ມີຄຳຂຽນໄວ້ໃນພະຄຳພີວ່າ”

ຕອບ:

**18** *ມທ 6:5 ເຊັ່ນດຽວກັບຢູ່ຫລັງຄາພະວິຫານ (ກຽດຕິຍົດ)*
*ມທ 6:24 ເຊັ່ນດຽວກັບຢູ່ໃນປ່າ (ວັດຖຸສິ່ງຂອງ)*
*ກຈກ 8:18-20 ເຊັ່ນດຽວກັບຢູ່ພູສູງ (ອຳນາດການປົກຄອງ)*

**19** *ເຊັ່ນດຽວກັບຢູ່ໃນປ່າ: ມທ 6:19 ມທ 6:24 ມທ 6:31 ມທ 6:27*
*ເຊັ່ນດຽວກັບຢູ່ຫລັງຄາພະວິຫານ: ມທ 6:2 ມທ 6:5 ມທ 6:16*
*ເຊັ່ນດຽວກັບຢູ່ພູສູງ: ມທ 5:38*

**20** *ງ.ຖືກ (ເພາະເຫັນທັງ 3 ເທື່ອ)*

ໃຫ້ທ່ານເອົາສໍສີຂຽວຂີດອ້ອມຄຳວ່າ "ມີຄຳຂຽນໄວ້ໃນພະຄຳພີວ່າ" ໃນ
ມທ 4:4; 4:7 ແລະ 4:10

**21** ທຸກເທື່ອທີ່ພະຍາມານມາທົດລອງພະເຍຊູ ພະອົງຕອບໂດຍຄຳໃດ? ________________

**22** ແຕ່ບໍ່ແມ່ນພະເຍຊູຜູ້ດຽວທີ່ກ່າວຄວາມນັ້ນ ໃຫ້ທ່ານອ່ານເລື່ອງການທົດລອງຢູ່ບ່ອນຫຼັງຄາພະວິຫານ ແມ່ນຜູ້ໃດອີກທີ່ ກ່າວຄວາມນັ້ນຈາກພະຄຳພີ? __________________________

**23** ຜູ້ທີ່ກ່າວພະຄຳພີທີ່ໃຊ້ບໍ່ຖືກກໍມີຫຼາຍເຊັ່ນດຽວກັນກັບພະຍາມານ ເຮົາຄວນຮຽນຮູ້ວິທີໃຊ້ຂໍ້ພະຄຳພີທີ່ບໍ່ຜິດ ເທື່ອໃດທີ່ ຍົກພະຄຳພີມາກ່າວເຮົາຄວນຈະສັງເກດຫມົດເລື່ອງ ຫຼືບົດກ່ອນແລະບົດທີ່ຕາມຫຼັງດ້ວຍ. ໃນ ມທ 4:4 ພະເຍຊູຊົງ ກ່າວວ່າ "ແຕ່ລ້ຽງດ້ວຍພະທຳ _______ ຂໍ້ທີ່ອອກມາຈາກພະໂອດຂອງພະເຈົ້າ" (ຈົ່ງຕື່ມຄວາມທີ່ຂາດ)

**24** ເມື່ອກ່ອນເຮົາໄດ້ຮຽນເລື່ອງພວກຟາລິຊາຍແລະພວກຊາດູກາຍ ພວກເຂົາກໍມັກປີ້ນຄວາມຫມາຍໃນພະຄຳພີເຊັ່ນດຽວ ກັນ. ກ. ແມ່ນພວກໃດທີ່ມັກຕື່ມຄວາມ? _______________
ຂ. ແມ່ນພວກໃດມັກຕັດຄວາມຈາກພະຄຳພີ? _________________________________

**25** ສາດສະຫນາໃດໆ ກໍຕາມທີ່ບໍ່ເຊື່ອຫມັ້ນໃນພະຄຳພີ ເຂົາມັກຂໍ້ພະຄຳພີທີ່ຖືກໃຈເຂົາ ແຕ່ເຂົາບໍ່ມັກຂໍ້ພະຄຳພີທີ່ບໍ່ເຂົ້າ ກັບຄຳສັ່ງສອນຂອງເຂົາ. ເຂົາອາດຈະມີຜູ້ທຳນວາຍຂອງເຂົາເອງນອກເຫນືອຈາກພະຄຳພີອີກດ້ວຍ ເຂົາອາດຈະຕື່ມຂໍ້ ຫຼືຕັດຂໍ້ຈາກພະຄຳພີ. ໃນ II ຕີໂມທຽວ 3:16-17 ພະຄຳພີຕອນໃດແດ່ເປັນທີ່ຊົງບັນດົນໃຈຈາກພະເຈົ້າ ໃຫ້ ຂຽນບັນທຶກໄວ້? ____

**26** ດັ່ງນັ້ນທັງພະຍາມານແລະສາດສະຫນາອື່ນໆ ທີ່ບໍ່ເຊື່ອໃນພະຄຳພີ ເຂົາຜິດໃນດ້ານໃດເປັນຕົ້ນ? (ເລືອກເອົາຂໍ້ທີ່ຖືກ)
ກ. ເຂົາບໍ່ຮູ້ພະຄຳພີ
ຂ. ເຂົາມັກເລືອກເອົາແຕ່ຂໍ້ພະຄຳພີທີ່ຖືກໃຈ
ຄ. ເຂົາຖືພະຄຳພີທັງຫມົດ

**27** ພະຍາມານແລະສາດສະຫນາອື່ນທີ່ບໍ່ປະຕິບັດຕາມພະຄຳພີ ຜິດໃນດ້ານໃດ? __________
_______________________________________________________________

ຕອບ:

***21*** *"ມີຄຳຂຽນໄວ້ໃນພະຄຳພີວ່າ"*

***22*** *ພະຍາມານ*

***23*** *ທຸກ*

***24*** *ກ. ຟາລິຊາຍ ຂ. ຊາດູກາຍ*

***25*** *ທຸກຕອນ*

***26*** *ຂ.ຖືກ*

***27*** *ເຂົາມັກເລືອກເອົາແຕ່ຂໍ້ພະຄຳພີທີ່ຖືກໃຈ*

**28** ທ່ານຈົ່ງຈື່ໄວ້ວ່າ ພະຍາມານແລະລູກນ້ອງຂອງມານກ່າວຂໍ້ພະຄຳພີໄດ້ ແຕ່ເຮົາຕ້ອງຖືພະຄຳພີຕະຫຼອດທັງຫມົດ ບໍ່ ແມ່ນໃຊ້ແຕ່ສ່ວນໃດທີ່ມັກຄືພະຍາມານເວລາມາໃຊ້ທົດລອງພະເຢຊູ.ເລື່ອງອາຫານພະອົງສອນໃນ ມທ ບົດ 4 ຂໍ້ໃດ?

| | |
|---|---|
| ຝຶກ: | ໃຫ້ທ່ານເອົາສໍສີຂຽວຂີດກ້ອງຕະຫຼອດ ມທ 4:4 ເພື່ອຕໍ່ໄປຈະຫາໄດ້ງ່າຍ |

**29** ເຖິງແມ່ນວ່າ ພະເຢຊູຍົກພະທຳຂອງພະເຈົ້າຫມົດສິ້ນມາຕໍ່ສູ້ພະຍາມານ ແຕ່ເຖິງວ່າເຮົາອາດຈະຮູ້ພະຄຳພີທັງຫມົດກໍ ຕາມຍັງບໍ່ພໍ ນອກຈາກພະວິນຍານບໍລິສຸດນຳຫນ້າເຮົາໄປຊອກຫາຄວາມຈິງ ແລ້ວເອົາຄວາມຈິງນັ້ນນຳມາໃຊ້. ຈົ່ງ ຊອກຫານ້ຳພະໄທຂອງພະເຈົ້າໃນຊີວິດເຮົາດ້ວຍການສະແຫວງຫາການຊົງນຳຈາກພະວິນຍານບໍລິສຸດ.

ກ. ໃນເມື່ອພະເຢຊູຮັບບັບຕິສະມາ ແມ່ນໃຜສະເດັດມາໃນຮູບຮ່າງເຫມືອນດັ່ງນົກເຂົາ?

_______________________________________________

ຂ. ໃນ ມທ 4:1 ແມ່ນໃຜໄປກັບພະອົງໃນປ່າ? ______________________

ຄ. ໃນ ລູກາ 4:14 ແມ່ນໃຜຢູ່ກັບພະອົງຕະຫຼອດເຖິງການທົດລອງຈະສຳເລັດ? ________

ງ. ແມ່ນໃຜຊ່ວຍພະເຢຊູ ໃຊ້ພະທຳຕໍ່ສູ້ການທົດລອງ? __________________

**30** ຄຳເວົ້າຂອງພະເຢຊູ ທີ່ວ່າ "ແຕ່ລ້ຽງດ້ວຍພະທຳທຸກຂໍ້ທີ່ອອກມາຈາກພະໂອດຂອງພະເຈົ້າ" ບໍ່ແມ່ນວ່າເຮົາຈະຈື່ທຸກ ຂໍ້ໃນພະຄຳພີຕາມລຳດັບ ຫມາຍຄວາມວ່າ ດ້ວຍການຊົງນຳຈາກພະວິນຍານບໍລິສຸດ ເຮົາທຸກຄົນສາມາດຮູ້ເລື່ອງນ້ຳພະໄທຂອງພະເຈົ້າ ແລະຄວາມຈິງທົ່ວໄປໃນພະຄຳພີ ຖ້າຮູ້ແລະເຂົ້າໃຈຢ່າງນັ້ນແລ້ວຕ້ອງປະຕິບັດຕາມອີກດ້ວຍ. ເປົ້າຫມາຍປະການຫນຶ່ງໃນຫຼັກສູດ ສ.ອ.ນ. ນີ້ຄືໃຫ້ຜູ້ຮຽນປະຕິບັດຕາມ. ດັ່ງນັ້ນວິທີໃຊ້ພະຄຳພີຢ່າງຖືກຕ້ອງຄືຫຍັງ? (ໃຫ້ເລືອກເອົາຂໍ້ທີ່ຖືກ)

ກ. ໃຫ້ໂຕ້ແຍ້ງກັນກ່ຽວກັບສາດສະຫນາ

ຂ. ຫາຫຼັກຖານໃນພະຄຳພີທີ່ຖືກກັບຄວາມຄິດຂອງເຮົາເອງ

ຄ. ໃຫ້ຮູ້ຄວາມຈິງແລະຮູ້ໃນນ້ຳພະໄທຂອງພະເຈົ້າໃນຊີວິດຂອງເຮົາເອງ

ງ. ຈື່ຂໍ້ພະຄຳພີຫລາຍໆ ເພື່ອອວດອ້າງຜູ້ອື່ນ.

**31** ອ້າຍນ້ອງເອີຍ! ຄັນເຮົາຈະທົນການທົດລອງຂອງພະຍາມານໄດ້ ເຮົາຈະແຍກພະທຳຂອງພະເຈົ້າ ແລະພະວິນຍານ ຂອງພະເຈົ້າອອກຈາກກັນບໍ່ໄດ້. ໃນ ເອເຟໂຊ 6:17 ອາຈານໂປໂລບອກວ່າ ພະແສງຂອງພະວິນຍານຄືຫຍັງ? ______________________

ຕອບ:

***28*** *ຂໍ້ 4*

***29*** *ກ. ພະວິນຍານຂອງພະເຈົາ ຂ. ພະວິນຍານ ຄ. ພະວິນຍານ ງ. ພະວິນຍານ*

***30*** *ຄ. ຖືກ*

***31*** *ພະທຳຂອງພະເຈົາ*

**32** ໃນເມື່ອເວລາພະເຢຊູຮັບບັບຕິສະມາ ພະອົງຮັບເຄື່ອງອາວຸດ 2 ຢ່າງໃດເພື່ອຕໍ່ສູ້ພະຍາມານໃນສະພາບເປັນມະນຸດ? ພະທຳຂອງ _______________ ແລະ ພະ __________________ (ຈົ່ງຕື່ມຄວາມທີ່ຂາດ)

**33** ປາກົດວ່າ ພະເຢຊູໄດ້ຮັບເຄື່ອງອາວຸດ 2 ຢ່າງ ເມື່ອພະອົງຮັບບັບຕິສະມາເຄື່ອງອາວຸດທີ່ພະອົງໃຊ້ໃນການຕໍ່ສູ້ພະຍາ ມານຄືຫຍັງ? __________________ ແລະ _________________

**34** ພະເຢຊູເຮັດໃຫ້ພະຍາມານຖອຍໜີ ແຕ່ບໍ່ແມ່ນໂດຍອຳນາດພະເຈົ້າ. ພະເຢຊູໃຊ້ພະທຳຂອງພະເຈົ້າ ແລະພະວິນ ຍານບໍລິສຸດຂອງພະເຈົ້າຈຶ່ງເຮັດໃຫ້ມານຖອຍໜີ. ພວກເຮົາເຊັ່ນດຽວກັນ ມີອຳນາດຈາກພະຄຳຂອງພະເຈົ້າ ແລະ ພະວິນຍານບໍລິສຸດ. ແມ່ນພະຄຳພີຂໍ້ໃດຕໍ່ໄປນີ້ທີ່ສອນໃຫ້ເຮົາຕໍ່ສູ້ກັບມານ? (ໃຫ້ເລືອກເອົາຂໍ້ທີ່ຖືກ)

ກ. ຢາໂກໂບ 4:7 ຄ. I ເປໂຕ 5:8-9

ຂ. ໂຢຮັນ 3:16 ງ. ເອເຟໂຊ 2:8-9

**35** ສອງຂໍ້ພະຄຳພີນັ້ນສອນໃຫ້ເຮົາເຮັດຢ່າງໃດເມື່ອພະຍາມານຈະມາທົດລອງເຮົາ? _______

*ການຕໍ່ສູ້ການທົດລອງຂອງພະຍາມານເປັນສິ່ງທີ່ສຳຄັນຫຼາຍ. ເທື່ອໃດທີ່ເຮົາສຳນຶກວ່າ ມານມາທົດລອງເຮົາ ມາວົນ ວຽນອ້ອມໂຕເຮົາເໝືອນດັ່ງໂຕສິງ ມາຕົວະເຮົາດ້ວຍການຂູ່ເຂັນທຸກປະການ ພວກຄຣິສຕຽນເຮົາຈົ່ງຕໍ່ສູ້ດ້ວຍອຳນາດຈາກພະທຳຂອງພະເຈົ້າ ແລະດ້ວຍການຊົງນຳຂອງພະວິນຍານບໍລິສຸດ.*

**36** ກ. ໃນ ມທ 4:10 ພະເຢຊູຕໍ່ສູ້ພະຍາມານໂດຍໃຊ້ຄວາມໃດ? (ຈົ່ງຕື່ມຄວາມທີ່ຂາດ)
"ຈົ່ງ ________________________"

ຂ. ໃນ ມທ 4:11 ພະຍາມານຈຶ່ງເຮັດຫຍັງ? ___________________________________

**37** ພະຍາມານມາທົດລອງພະເຢຊູ 3 ເທື່ອ ແລ້ວພະເຢຊູຕອບພະຍາມານນັ້ນ 3 ເທື່ອດ້ວຍກັນ. ໃນທັງ 3 ເທື່ອນັ້ນ ພະເຢຊູອ້າງເຖິງພະທຳຄຳພີ ພະເຢຊູໄດ້ຮັບການໜູນໃຈຈາກພະຄຳພີຈັກເທື່ອ? (ໃຫ້ເລືອກເອົາຂໍ້ທີ່ຖືກ)

ກ. ບາງເທື່ອເທົ່ານັ້ນ ຂ. ທຸກເທື່ອ ຄ. ບໍ່ຮັບເລີຍ

ຕອບ:

***32*** *ພະທຳຂອງພະເຈາ ພະວິນຍານຂອງພະເຈາ*

***33*** *ພະທຳຂອງພະເຈາ ແລະ ພະວິນຍານ ຂອງພະເຈາ*

***34*** *ກ. ແລະ ຄ ຖືກ*

***35*** *ຈົ່ງຕໍ່ສູ້*

***36*** *ກ. ຈົ່ງໜີໄປເສຍ ຂ. ໜີໄປ*

***37*** *ຂ.ຖືກ*

**38** ເທື່ອໃດທີ່ຄົນຄຣິສຕຽນຖືກການທົດລອງເຮົາຈະເຮັດຢ່າງໃດ? (ຈົ່ງຕື່ມຄວາມທີ່ຂາດ)
"ຈົ່ງຕໍ່ _______ ພະຍາມານໂດຍພະ _________________ ແລະພະ _______________"

**39** ກ. ສັນຍາລັກນີ້  ໝາຍເຖິງຫຍັງ? ____________________________

ຂ. ສັນຍາລັກນີ້  ໝາຍເຖິງຫຍັງ? ____________________________

**40** ພະເຢຊູໄດ້ມີການທົດລອງຫຼາຍປະການ ເຊັ່ນດຽວກັນພວກຄຣິສຕຽນໃນສະໄໝນີ້ຈະພົບການທົດລອງດ້ວຍ. ພວກ ເຮົາຈະສາມາດໃຊ້ເຄື່ອງອາວຸດຢ່າງດຽວກັນກັບພະເຢຊູ ຄືເຄື່ອງອາວຸດໃດ? ____________________________ ແລະ ______________________________

**41** ຖ້າຄຣິສຕຽນຈະຕໍ່ສູ້ພະຍາມານໂດຍພະທຳຂອງພະເຈົ້າແລະພະວິນຍານບໍລິສຸດ ຜົນສຸດທ້າຍຈະເປັນຢ່າງໃດ? ________________________________________________________

*ຢ່າລືມບົດເສັງ*

ຕອບ:

***38*** *ຈົ່ງຕໍ່ສູ້ພະຍາມານໂດຍພະທຳຂອງພະເຈົ້າ ແລະ ພະວິນຍານຂອງພະເຈົ້າ*

***39*** *ກ. ພະວິນຍານຂອງພະເຈົ້າ ຂ. ພະທຳຂອງພະເຈົ້າ*

***40*** *ພະທຳຂອງພະເຈົ້າ... ພະວິນຍານຂອງພະເຈົ້າ*

***41*** *ພະຍາມານຈະໜີໄປ*